ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0445/ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 12 FEB 2026

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ ແລະ ວິສາຫະກິດ ທຳຄວາມສະອາດ ທີ່ນັບຖື.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາທຳຄວາມສະອາດສະຖານທີ່ເຮັດວຽກ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດ ແລະ ວິສາຫະກິດ ທຳຄວາມສະອາດ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາທຳຄວາມສະອາດສະຖານທີ່ເຮັດວຽກ ຢູ່ ທຄຕລ ສຳນັກງານໃຫຍ່ ດັ່ງລາຍລະອຽດລຸ່ມນີ້:

## I. ລາຍການໜ້າວຽກປະກອບມີ

| ລ/ດ | ລາຍການໜ້າວຽກ | ໄລຍະເວລາໃນການຈັດຕັ້ງປະຕິບັດ | | | ໝາຍເຫດ |
|---|---|---|---|---|---|
| | | ປະຈຳວັນ | ປະຈຳອາທິດ | ປະຈຳເດືອນ | |
| 1 | ປັດກວາດ, ຖູປຽກ-ແຫ້ງ ພື້ນຫ້ອງເຮັດວຽກ ດ້ວຍນ້ຳຢາສະເພາະ ແລະ ດູດຝຸ່ນດ້ວຍເຄື່ອງຈັກ | ✓ | | | |
| 2 | ເຊັດຝຸ່ນຕາມແວ່ນ, ໂຕະ, ຕັ່ງ, ຕູ້, ຄອມພິວເຕີ, ເຄົາເຕີ, ບານປະຕູແກ້ວ ແລະ ເຄື່ອງເຟີນີເຈີ້ ດ້ວຍນ້ຳຢາສະເພາະ | ✓ | | | |
| 3 | ເກັບຂີ້ເຫຍື້ອທຸກໆຫ້ອງເອົາໄປຖິ້ມຕາມຈຸດທີ່ກຳນົດ ພ້ອມທັງລ້າງກະຕ່າ ແລະ ຖັງໃສ່ຂີ້ເຫຍື້ອ | ✓ | | | |
| 4 | ສຽບ-ຖອດ ສາຍໄຟໝໍ້ຕົ້ມນ້ຳ ແລະ ເຕີມນ້ຳ | ✓ | | | |
| 5 | ຂັດລ້າງຊັກໂຄກ ແລະ ໂຖປັດຊະວະດ້ວຍນ້ຳຢາຂ້າເຊື້ອ | ✓ | | | |
| 6 | ລ້າງອ່າງລ້າງມື, ເຄົາເຕີ້ ແລະ ກັອກນ້ຳໃນຫ້ອງນ້ຳ ດ້ວຍນ້ຳຢາຂ້າເຊື້ອ | ✓ | | | |
| 7 | ຂັດລ້າງ ແລະ ຖູພື້ນຫ້ອງນ້ຳ ດ້ວຍນ້ຳຢາຂ້າເຊື້ອ | ✓ | | | |
| 8 | ເຊັດແວ່ນພາຍໃນຫ້ອງນ້ຳ ແລະ ເຊັດ-ຂັດລ້າງຕາມຝາຫ້ອງນ້ຳດ້ວຍນ້ຳຢາຂ້າເຊື້ອ | ✓ | | | |
| 9 | ກວດກາ ແລະ ເຕີມເຄື່ອງໃຊ້ພາຍໃນຫ້ອງນ້ຳ ເຊັ່ນ: ເຈ້ຍທິດຊູ, ນ້ຳຢາລ້າງມື, ນ້ຳຫອມດັບກິ່ນ/ກ້ອນດັບກິ່ນ, ຖົງຮອງກະຕ່າຂີ້ເຫຍື້ອ | ✓ | | | |
| 10 | ລ້າງກະຕ່າ ແລະ ຖັງຂີ້ເຫຍື້ອ ພາຍໃນຫ້ອງນ້ຳ | ✓ | | | |
| 11 | ເກັບຂີ້ເຫຍື້ອຢູ່ຫ້ອງນ້ຳໄປຖິ້ມຕາມຈຸດທີ່ກຳນົດ | ✓ | | | |
| 12 | ປັດກວາດ, ເຊັດຖູຕາມຂັ້ນໄດ ພາຍໃນ-ພາຍນອກ, ລະບຽງດ້ານໜ້າ ແລະ ດ້ານຫຼັງ | ✓ | | | |
| 13 | ລ້າງຈອກ, ຈານ, ຖ້ວຍ ແລະ ບ່ວງ ສຳລັບຮັບແຂກ ແລະ ພະນັກງານ | ✓ | | | |
| 14 | ຫົດນ້ຳດອກໄມ້ພາຍໃນອາຄານຂອງຫ້ອງຮັບແຂກ ແລະ ພະນັກງານ | ✓ | | | |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | | | | |
|---|---|---|---|---|---|
| 15 | ປັດຝຸ່ນ, ແລະ ອະນາໄມໄຍແມງມຸມ ແລະ ເພດານ | | ✓ | | |
| 16 | ປັດຝຸ່ນຕາມປະຕູ, ປ່ອງຢ້ຽມ, ເຫຼັກກັນຂະໂມຍ, ສະວິດໄຟ, ປັກໄຟ, ຖັງດັບເພີງ, ເຄື່ອງດູດອາກາດ ພາຍໃນຫ້ອງເຮັດວຽກ ແລະ ຫ້ອງນໍ້າ | | ✓ | | |
| 17 | ລ້າງພື້ນດ້ວຍເຄື່ອງຈັກ ກໍລະນີມີຄາບດໍາ ແລະ ຄາບເປື້ອນຝັງແໜ້ນ | | | ✓ | |

## II. ສະຖານທີ່ ແລະ ບໍລິມາດ

1. ທຄຕລ ສໍານັກງານໃຫຍ່ ອາຄານ A ຊັ້ນ 1 ພ້ອມດ້ວຍລະບຽງ, ຕັ້ງຢູ່ ບ້ານຊຽງຍືນ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ, ເນື້ອທີ່ທັງໝົດ 363 ຕາແມັດ ມີຫ້ອງນໍ້າ 6 ຫ້ອງ.
2. ທຄຕລ ສໍານັກງານໃຫຍ່ ອາຄານ B ຊັ້ນ 1 ພ້ອມດ້ວຍລະບຽງ, ຕັ້ງຢູ່ ບ້ານຊຽງຍືນ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນເນື້ອທີ່ທັງໝົດ 125 ຕາແມັດ.
3. ທຄຕລ ສໍານັກງານໃຫຍ່ ອາຄານ C ຊັ້ນ 1 ພ້ອມດ້ວຍລະບຽງ, ຕັ້ງຢູ່ ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເນື້ອທີ່ທັງໝົດ 500 ຕາແມັດ ມີຫ້ອງນໍ້າ 4 ຫ້ອງ;

## III. ເງື່ອນໄຂການປະກອບເອກະສານການປະມູນ

### 1. ເອກະສານຊອງທີ 1 (ບໍ່ປິດຊອງ)

1) ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດ (ສໍາເນົາໃບທະບຽນວິຫາສາຫະກິດ, ໃບຢັ້ງຢືນການເສຍອາກອນ (ປີ 2024 ຫຼື 2025)
2) ເອກະສານກ່ຽວກັບມາດຕະຖານໃຫ້ລະບຸຄົບຖ້ວນກ່ຽວກັບ ວິທີການປະຕິບັດວຽກ, ວັດສະດຸ, ຍີ່ຫໍ້/ລຸ້ນ ເຊິ່ງບໍລິສັດຕ້ອງຮັບຜິດຊອບເອງທັງໝົດ ເປັນຕົ້ນແມ່ນ ອຸປະກອນຮັບໃຊ້ທໍາຄວາມສະອາດ, ນໍ້າຢາທໍາຄວາມສະອາດ, ຜ້າແພທີ່ນໍາໃຊ້ ໃຫ້ຄົບຖ້ວນ ແລະ ພຽງພໍໃນການນໍາໃຊ້ຕົວຈິງ ລວມເຖິງຮັບຜິດຊອບພາຫະນະເດີນທາງໄປແຕ່ລະຈຸດເອງ. ສໍາລັບທິດຊູ ແລະ ຖົງຢາງໃສ່ຂີ້ເຫຍື້ອແມ່ນ ທຄຕລ ຈະປະກອບໃຫ້;
3) ຖຸນຈຸດທີ່ຂອງບໍລິສັດ ແລະ ປະສົບການທີ່ເຮັດວຽກດັ່ງກ່າວ ຫຼື ວຽກທີ່ຄ້າຍຄືລັກສະນະດຽວກັນ;
4) ກໍານົດຍື່ນຊອງມາດຕະຖານເຕັກນິກ ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສໍານັກງານໃຫຍ່ ທີ່ປ່ອງຂາອອກ-ຂາເຂົ້າ ອາຄານ C ຊັ້ນ 4 ເຊິ່ງຈະປິດຮັບ ເວລາ 15:30 ໂມງ ຂອງວັນທີ 27/02/2026;

**ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

### 2. ເອກະສານຊອງທີ 2 (ປິດຊອງ)

1) ໃບສະເໜີລາຄາຕ້ອງລະບຸເປັນລາຄາລວມທັງໝົດ 3 ຈຸດ ທີ່ເປັນລາຄາຕໍ່ເດືອນ ແລະ ຕໍ່ປີ ແລະ ຕໍ່ 02 ປີ ພ້ອມທັງສະແດງລາຄາທີ່ລວມອາກອນມູນຄ່າ ທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ;
2) ໃນວັນທີ 05/03/2026 ເວລາ 9:00 ໂມງ ແມ່ນມື້ເປີດຊອງປະມູນ ແຈ້ງໃຫ້ບໍລິສັດຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມອາຄານ C ຊັ້ນ 5 ຫ້ອງ 5/2;
3) ຜູ້ເຂົ້າຮ່ວມຍື່ນຊອງປະມູນ ຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 05/05/2026)

ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ) ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

## IV. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ຊະນະການປະມູນ

1) ຖ້າຜູ້ຊະນະການປະມູນປະຕິເສດການໃນເຊັນສັນຍາກັບ ທຄຕລ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ;
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ໄລຍະເວລາ 02 ປີ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນຄວາມຮັບຜິດຊອບຂອງຜູ້ຮັບເໝົາ;
3) ການປະຕິບັດວຽກແມ່ນເລີ່ມແຕ່ເວລາ 7:00-18:00 ໂມງ ວັນຈັນ-ສຸກ ກໍລະນີມີຄວາມຈຳເປັນແມ່ນໃຫ້ເຂົ້າມາປະຕິບັດວຽກໃນ ວັນເສົາ-ອາທິດ ຕື່ມເພື່ອເຮັດໃຫ້ສະຖານທີ່ສະອາດ;
4) ການຊຳລະຄ່າບໍລິການແມ່ນເປັນລາຍເດືອນລວມອາກອນມູນຄ່າເພີ່ມ ດ້ວຍສະກຸນເງິນກີບ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**

ນ. ສາຍສະໝອນ ຈັນທະຈັກ

**ຜູ້ປະສານງານ:**

ນ. ຫຼ້າໄພວັນ ປັນນະວົງ 020 22233419